# ເວລາທີ່ທ່ານສາມາດຕິດຕໍ່ຫາໄດ້

## ສາຍດ່ວນສາມາດຊ່ວຍທ່ານ:

- ເຂົ້າໃຈຄວາມແຕກຕ່າງລະຫວ່າງອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ແລະ ເຫດການທີ່ເກີດຈາກຄວາມອະຄະຕິ
- ຮຽນຮູ້ວ່າມີທາງເລືອກ ແລະ ຊັບພະຍາກອນໃດແດ່
- ຕິດຕໍ່ຫາການບໍລິການຕ່າງໆທີ່ຖືເອົາຜູ້ເຄາະຮ້າຍເປັນສູນກາງ, ຄວາມສາມາດໃນການເຂົ້າໃຈວັດທະນະທຳ ແລະ ການຄຳນຶງເຖິງບາດແຜທາງຈິດໃຈຢູ່ໃນພື້ນທີ່ຂອງທ່ານ

ທ່ານອາດຈະໂທຫາສາຍດ່ວນ ຫາກວ່າທ່ານໄດ້ມີປະສົບການກັບພຶດຕິກຳແບບນັ້ນໂດຍກົງກັບຕົວທ່ານເອງ ຫຼື ເຫັນເກີດຂຶ້ນກັບຄົນອື່ນ.

## ກ່ຽວກັບ Hate Crimes & Bias Incidents Hotline

**ສາຍດ່ວນນີ້ແມ່ນຊ່ອງທາງແຈ້ງຂໍ້ມູນທີ່ບໍ່ແມ່ນເຫດການສຸກເສີນ ແລະ ເປັນຈຸດປະສານງານ** ເພື່ອຊ່ວຍເຫຼືອບຸກຄົນທີ່ໄດ້ຮັບຜົນກະທົບຈາກ ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ແລະ ເຫດການທີ່ເກີດຈາກຄວາມອະຄະຕິ ເພື່ອໃຫ້ເຂົ້າເຖິງການສະໜັບສະໜູນ. ສາຍດ່ວນດັ່ງກ່າວມີບໍລິການໃນຫຼາຍໆພາສາ ແລະ ຮັກສາຂໍ້ມູນໃຫ້ເປັນຄວາມລັບ. ສາຍດ່ວນຈະຕິດຕໍ່ຫາໜ່ວຍງານທີ່ບັງຄັບໃຊ້ກົດໝາຍໃນເວລາທີ່ທ່ານຕ້ອງການເທົ່ານັ້ນ ແລະ ຕ້ອງມີການຍິນຍອມຈາກທ່ານ.

### ວິທີການລາຍງານ

**855-225-1010**

**atg.wa.gov/report-hate**

ລະບົບຈະຊ່ວຍຕໍ່ສາຍໃຫ້ທ່ານໄດ້ເວົ້າກັບຄົນທີ່ໃຊ້ພາສາດຽວກັບທ່ານ

ລາຍງານກ່ຽວກັບຄວາມກຽດຊັງ ຮັບການສະໜັບສະໜູນ

Washington State Hate Crimes & Bias Incidents Hotline

# ລາຍງານກ່ຽວກັບຄວາມກຽດຊັງ. ຮັບການສະໜັບສະໜູນ.

Washington State Hate Crimes & Bias Incidents Hotline (ສາຍດ່ວນ ດ້ານອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ແລະ ເຫດການທີ່ເກີດຈາກຄວາມອະຄະຕິ ຂອງລັດວໍຊິງຕັນ) ມີໃຫ້ຢູ່ນີ້ ເພື່ອສະໜັບສະໜູນທຸກຄົນທີ່ເຄີຍມີປະສົບການ ຫຼື ພົບເຫັນການກະທຳທີ່ເກີດຈາກຄວາມກຽດຊັງ.

ສາຍດ່ວນດັ່ງກ່າວ ບໍລິການໃຫ້ຄວາມຊ່ວຍເຫຼືອ **ໂດຍບໍ່ມີຄ່າໃຊ້ຈ່າຍ, ຮັກສາຄວາມລັບ** ໃນທົ່ວລັດ. ທ່ານບໍ່ຈຳເປັນຕ້ອງຮູ້ວ່າ ສິ່ງທີ່ເກີດຂຶ້ນແມ່ນອາດຊະຍາກຳຫຼືບໍ່. ພວກເຮົາຈະຊ່ວຍທ່ານເຂົ້າໃຈທາງເລືອກຕ່າງໆຂອງທ່ານ.

### ຕິດຕໍ່ສາຍດ່ວນ

**855-225-1010**

**atg.wa.gov/report-hate**

**ມີບໍລິການໃນຫຼາຍພາສາ**

ສາຍດ່ວນນີ້ຈະຮັກສາຄວາມລັບຂອງທ່ານ, ບໍ່ມີຄ່າໃຊ້ຈ່າຍ ແລະ ມີໃຫ້ທົ່ວລັດ ໂດຍບໍ່ຂຶ້ນກັບສະຖານະພາບການເຂົ້າເມືອງຂອງທ່ານ. ພວກເຮົາບໍ່ແມ່ນຕຳຫຼວດ ແລະ ພວກເຮົາຈະບໍ່ລາຍງານຫາຕຳຫຼວດໂດຍທີ່ທ່ານບໍ່ອະນຸຍາດ.

ສະໜອງໂດຍ Washington State Attorney General’s Office (ສຳນັກງານ ໄອຍະການສູງສຸດຂອງລັດວໍຊິງຕັນ).

ສາຍດ່ວນນີ້ຈະຮັກສາຄວາມລັບຂອງທ່ານ, ບໍ່ມີຄ່າໃຊ້ຈ່າຍ ແລະ ມີໃຫ້ທົ່ວລັດ ໂດຍບໍ່ຂຶ້ນກັບສະຖານະພາບການເຂົ້າເມືອງຂອງທ່ານ. ພວກເຮົາບໍ່ແມ່ນຕຳຫຼວດ ແລະ ພວກເຮົາຈະບໍ່ລາຍງານຫາຕຳຫຼວດໂດຍທີ່ທ່ານບໍ່ອະນຸຍາດ.

ສະໜອງໂດຍ Washington State Attorney General’s Office

# Washington State Hate Crimes & Bias Incidents Hotline

ລາຍງານກ່ຽວກັບຄວາມກຽດຊັງ ຮັບການສະໜັບສະໜູນ

## ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ແມ່ນຫຍັງ?

ໃນລັດວໍຊິຕັນ, ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ສາມາດເປັນອັນໃດອັນໜຶ່ງຈາກຫຼາຍໆຢ່າງ.
ມັນສາມາດເປັນ **ການໂຈມຕີທີ່ມີເຈດຕະນາຮ້າຍ ແລະ ຕັ້ງໃຈ, ການທຳລາຍຊັບສິນ ຫຼື ການນາບຂູ່ທີ່ຈະໂຈມຕີ \ຫຼື ທຳລາຍຊັບສິນ** ຕໍ່ຄົນອື່ນ.

### ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ເກີດຂຶ້ນຍ້ອນວ່າ ເຫັນຄົນນັ້ນ ຫຼື ຄວາມຈິງຂອງຄົນນັ້ນມີ:

- ເຊື້ອຊາດ
- ສີຜິວ
- ສາສະໜາ
- ບັນພະບຸລຸດ
- ຊາດກຳເນີດ
- ເພດ
- ລົດສະນິຍົມທາງເພດ
- ການສະແດງອອກ ຫຼື ອັດຕະລັກທາງເພດ
- ຄວາມພິການທາງດ້ານສະຕິປັນຍາ, ຮ່າງກາຍ ຫຼື ປະສາດສຳຜັດ

**ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ແມ່ນຄວາມຜິດທາງອາຍາ ໃນລັດວໍຊິຕັນ** (Revised Code of Washington (RCW, ລະຫັດຂອງລັດວໍຊິງຕັນສະບັບປັບປຸງ) 9A.36.080).

## ເຫດການທີ່ເກີດຈາກຄວາມອະຄະຕິ ແມ່ນຫຍັງ?

ເຫດການທີ່ເກີດຈາກຄວາມອະຄະຕິແມ່ນ **ການສະແດງອອກເຖິງຄວາມເປັນປໍລະປັກຢ່າງຕັ້ງໃຈ** ທີ່ມີຕໍ່ຄົນອື່ນຍ້ອນເຫັນຄົນນັ້ນ ຫຼື ຄວາມຈິງຂອງຄົນນັ້ນມີ:

- ເຊື້ອຊາດ
- ສີຜິວ
- ລັດທິ ຫຼື ສາສະໜາ
- ບັນພະບຸລຸດ
- ຊາດກຳເນີດ
- ສັນຊາດ ຫຼື ສະຖານະພາບການເຂົ້າເມືອງ
- ເພດ
- ທະຫານຜ່ານເສິກທີ່ປົດປະຈຳການຢ່າງມີກຽດ ຫຼື ສະຖານະພາບທາງທະຫານ
- ລົດສະນິຍົມທາງເພດ
- ການສະແດງອອກ ຫຼື ອັດຕະລັກທາງເພດ
- ຄວາມພິການທາງປະສາດສຳຜັດ, ສະຕິປັນຍາ ຫຼື ຮ່າງກາຍ
- ນຳໃຊ້ໝານຳທາງ ຫຼື ສັດຊ່ວຍເຫຼືອທີ່ໄດ້ຮັບການຝຶກຝົນ

### ເຫດການທີ່ເກີດຈາກຄວາມອະຄະຕິ ບໍ່ໄດ້ຖືກຍົກລະດັບໃຫ້ເປັນອາດຊະຍາກຳ.

**ຕົວຢ່າງ ມີດັ່ງນີ້:**

- ນຳໃຊ້ພາສາປ້ອຍດ່າຕາມຄຸນລັກສະນະທີ່ເຫັນ.
- ສ້າງຮູບພາບ ຫຼື ຮູບແຕ້ມທີ່ມີລັກສະນະອອກໄປທາງເຊື້ອຊາດ ຫຼື ປ້ອຍດ່າ.
- ການເຍາະເຍີຍຄົນອື່ນຕາມຄວາມພິການ, ວັດທະນະທຳ ຫຼື ການປະຕິບັດຕົວຂອງເຂົາເຈົ້າ.